Pasaxon
Monday, March 5, 2018
Page 1 & 2

# ໂຄງການປັບປຸງອາຄານສະໜາມບິນ ວັດໄຕ ໃກ້ຈະສຳເລັດ

ໂຄງການປັບປຸງອາຄານ ຜູ້ໂດຍສານສະໜາມບິນສາກົນ ວັດໄຕ ໃກ້ຈະສຳເລັດແລ້ວ ມາຮອດປັດຈຸບັນມີຄວາມຄືບໜ້າແລ້ວ 81%. ສ່ວນການຂະຫຍາຍອາຄານຜູ້ໂດຍສານສາກົນເກືອບຈະສຳເລັດທັງໝົດ, ຂະນະທີ່ອາຄານຜູ້ໂດຍສານພາຍໃນກຳລັງເລັ່ງກໍ່ສ້າງ ໂດຍຈະໃຫ້ສຳເລັດທັງໝົດໃນເດືອນມິຖຸນາ ແລະ ຈະມີພິທີມອບ - ຮັບໃນເດືອນກໍລະກົດຈະມາເຖິງນີ້.

ທ່ານ ສີສະຫງວນ ຈັນທະວົງ ຫົວໜ້າໂຄງການປັບປຸງອາຄານສະໜາມບິນສາກົນ ວັດໄຕ ເປີດເຜີຍຕໍ່ສື່ມວນຊົນ ເມື່ອວັນທີ 2 ມີນາ ນີ້ວ່າ: ໂຄງການປັບປຸງສະໜາມບິນສາກົນວັດໄຕ ເປັນການຂະຫຍາຍອາຄານຜູ້ໂດຍສານສາກົນ ແລະ ກໍ່ສ້າງອາຄານຜູ້ໂດຍສານພາຍໃນຫຼັງໃໝ່ ລວມທັງເຮືອນສ້ອມແປງສະໜາມບິນ, ເສັ້ນທາງແວ່ (Taxiway) ເສັ້ນໃໝ່,

ອ່ານຕໍ່ໜ້າ 2






ປັບປຸງເສັ້ນທາງເຂດບໍລິການ, ບ່ອນຈອດລົດ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ໂດຍສະເພາະແມ່ນຂອດການຮັກສາຄວາມປອດໄພພາຍໃນສະໜາມບິນ ໂດຍແມ່ນທຶນກູ້ຢືມດອກເບ້ຍຕ່ຳຈາກລັດຖະບານຍີ່ປຸ່ນ ໃນໂຄງການຊ່ວຍເຫຼືອ ເພື່ອການພັດທະນາ ຫຼື (ODA) ຈຳນວນ 61 ລ້ານໂດລາ ແລະ ບໍລິສັດ ຮາຊາມະແອນໂດ (HAZAMA ANDO) ເປັນຜູ້ຮັບເໝົາກໍ່ສ້າງ.

ທ່ານກ່າວອີກວ່າ: ໃນໄລຍະຜ່ານມາມີຈຳນວນຜູ້ໂດຍສານໄດ້ເພີ່ມຂຶ້ນທຸກປີ ໂດຍປີ 2000 - 2009 ມີຜູ້ໂດຍສານເພີ່ມຂຶ້ນ 9%, ໃນປີ 2013 ຮອງຮັບຖ້ຽວບິນສາຍຕ່າງປະເທດ 202 ຖ້ຽວ ແລະ ພາຍໃນ 270 ຖ້ຽວຕໍ່ອາທິດ, ໃນປີ 2016 ມີຜູ້ໂດຍສານເພີ່ມຂຶ້ນເປັນ 1,5 ລ້ານກ່ວາຄົນ ໃນນັ້ນຜູ້ໂດຍສານສາຍຕ່າງປະເທດ 1.108.000 ຄົນ ຊຶ່ງການເພີ່ມຂຶ້ນດັ່ງກ່າວແມ່ນໄວກ່ວາການຄາດຄະເນເບື້ອງຕົ້ນ ຊຶ່ງການຄາດຄະເນເບື້ອງຕົ້ນແມ່ນຮອດປີ 2023 ຈຳນວນຜູ້ໂດຍສານຈະມີປະມານ 1,5 ລ້ານຄົນ ຊຶ່ງປັດຈຸບັນຜູ້ໂດຍສານໄດ້ຈຸເພດານການຄາດຄະເນດັ່ງກ່າວແລ້ວ, ດັ່ງນັ້ນ ຈຶ່ງຈຳເປັນຕ້ອງໄດ້ປັບປຸງ ແລະ ຂະຫຍາຍອາຄານຜູ້ໂດຍສານສາກົນ ແລະ ກໍ່ສ້າງອາຄານຜູ້ໂດຍສານພາຍໃນເພື່ອຮອງຮັບການເພີ່ມຂຶ້ນຢ່າງໄວວາ ຊຶ່ງການປັບປຸງຄັ້ງນີ້ຈະສາມາດຮອງຮັບຜູ້ໂດຍສານໄດ້ປະມານ 3 ລ້ານຄົນຕໍ່ປີ ຫຼື ປະມານ 700 ຄົນຕໍ່ຄັ້ງໃນຊົ່ວໂມງເລັ່ງດ່ວນ (ແຕ່ 10:00 ໂມງ - 13:00 ໂມງ).

ໂຄງການດັ່ງກ່າວໄດ້ຂະຫຍາຍອາຄານຜູ້ໂດຍສານສາຍຕ່າງປະເທດອອກຍາວ 45 ແມັດ ຊຶ່ງໄດ້ປັບປຸງຫຼາຍຂອດ ໂດຍສະເພາະແມ່ນການຮັກສາຄວາມປອດໄພ ໃນຂະນະທີ່ຈຸດກວດຄົນເຂົ້າ - ອອກເມືອງ (ຕມ) ຂາອອກຈາກເດີມບໍລິການ 8 ປ່ອງ ເພີ່ມຂຶ້ນເປັນ 13 ປ່ອງ, ສ່ວນຂາເຂົ້າຈາກເດີມ 8 ປ່ອງ ເພີ່ມຂຶ້ນເປັນ 15 ປ່ອງ, ສ່ວນທາງຂຶ້ນ - ລົງຂອງຜູ້ໂດຍສານ ຊຶ່ງເມື່ອກ່ອນແມ່ນຊ່ອງທາງດຽວກັນ (ຍ່າງສວນກັນ) ແຕ່ຫຼັງຈາກປັບປຸງຈະໄປຄົນລະຊ່ອງທາງ ໂດຍມີຂັ້ນໄດເລື່ອນ 11 ຈຸດ ແລະ ລິບອີກ 9 ຈຸດ ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ໂດຍສານ.

ການປັບປຸງຄັ້ງນີ້ໄດ້ເຮັດໃຫ້ອາຄານສະໜາມບິນສາກົນວັດໄຕກວ້າງຂວາງຂຶ້ນ, ມີຄວາມທັນສະໄໝຂຶ້ນຫຼາຍ, ທຽບໃສ່ໄລຍະຜ່ານມາ.